ສະພາແຫ່ງຊາດ ຊຸດທີ VII ລະດົມຄວາມເຫັນໃສ່ຮ່າງກົດໝາຍວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ
ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສະພາແຫ່ງຊາດຊຸດທີVII ໄດ້ດໍາເນີນມາເຖີງວັນທີ 19 ກໍລ
ະ

 ກົດ 2013 ຢູ່ສະພາແຫ່ງຊາດຊຶ່ງເປັນມື້ທີ 10 ໂດຍການເປັນປະທານຂອງທ່ານສົມພັນແພງຄຳມີ,
ຮອງປະທານສະພາ ແຫ່ງຊາດ.

ໃນວັນທີ 19 ກໍລະກົດ 2013, ທ່ານ ສຈ.ດຣ.ບໍ່ວຽງຄໍາວົງດາລາ,ລັດຖະມົນຕີວ່າການ ກະຊວງ
ວິທະຍາ ສາດ ແລະ ເຕັກໂນໂລຊີ ໄດ້ສະເໜີ
ຮ່າງກົດໝາຍວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ
ຕໍ່ກອງປະຊຸມດັ່ງກ່າວຊຶ່ງ
ປະກອບມີ
12
ພາກ,
8
ໝວດ ແລະ
69
ມາດຕາ,
ໄດ້
ກຳນົດຫຼັກການ
,
ລະບຽບການ ແລະ ມາດຕະການກ່ຽວກັບ ການຄຸ້ມຄອງ
,
ການກວດກາວຽກງານ ວິທະຍາສາດ
ແລະ
ເຕັກໂນໂລຊີ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານ ວິທະຍາສາດ ແລະ ເຕັກໂນໂລຊີ
ເຂົ້າສູ່ລະບົບ
ແລະ ສາມາດເຊື່ອມໂຍງກັບສາກົນ.

 1 / 5

ສະພາແຫ່ງຊາດ ຊຸດທີ VII ລະດົມຄວາມເຫັນໃສ່ຮ່າງກົດໝາຍວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ
ການອອກກົດໝາຍດັ່ງກ່າວ ແນໃສ່ຊຸກຍູ້, ສົ່ງເສີມການຄົ້ນຄວ້າ
ດ້ານວິທະຍາສາດເພື່ອການພັດທະນາ , ການປະດິດສ້າງ,
ນະວັດຕະກຳ ແລະ ການບໍລິການດ້ານເຕັກໂນໂລຊີໃໝ່ ປະກອບສ່ວນເຂົ້າໃນການຫັນເປັນ
ອຸດສາຫະກໍາທັນສະໄໝ ແລະ
ການພັດທະນາເສດຖະກິດ
-
ສັງຄົມ.

ສປປ ລາວ ຍັງບໍ່ທັນມີກົດໝາຍວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີມາກ່ອນ ແລະ ກົດໝາຍນີ້
ຖືວ່າເປັນກົດໝາຍໃໝ່ສໍາລັບຂົງເຂດວຽກງານວິທະຍາ ສາດ ແລະເຕັກໂນໂລຊີ ຂອງປະເທດເຮົາ.

            ພາຍຫຼັງການສະເໜີຮ່າງກົດໝາຍດັ່ງກ່າວແລ້ວ, ປະທານກອງປະຊຸມ
ກໍໄດ້ໃຫ້ຄໍາຖາມເຈາະຈີ້ມ ແລະ ໃຫ້ທິດຊີ້ນຳ ໃນການປະກອບຄຳເຫັນ ໃສ່ຮ່າງກົດໝາຍ

ສະບັບນີ້.

           ຈາກນັ້ນ, ບັນດາສະມາຊິກສະພາແຫ່ງຊາດ (ສສຊ)
ໄດ້ຜັດປ່ຽນກັນຂື້ນປະກອບຄໍາເຫັນໃສ່ຮ່າງກົດໝາຍຢ່າງກົງໄປກົງມາເພື່ອເຮັດໃຫ້ມີກົດໝາຍ
ມີຄວາມຮັດ ກຸມ ແລະ ສົມບູນຂື້ນ.

           ໂດຍພື້ນຖານແລ້ວ, ສະມາຊິກ ສສຊ ໄດ້ຊົມເຊີຍການສ້າງກົດໝາຍສະບັບນີ້ ແລະ
ເຫັນດີຕໍ່ເນື້ອໃນຂອງກົດໝາຍເປັນສ່ວນຫຼາຍ ແລະ ສະມາ ຊິກສະພາແຫ່ງ

ຊາດ ໄດ້ມີຂໍ້ສະເໜີທີ່ເປັນປະໂຫຍດຫຼາຍໃນການປັບປຸງແກ້ໄຂເນື້ອໃນຂອງບາງມາດຕາ
ເພື່ອໃຫ້ມີຄວາມສອດຄ່ອງ, ຈະແຈ້ງ ແລະ ສົມບູນຂື້ນ ເຊັ່ນ: ວຽກງານວິທະຍາ ສາດ ແລະ
ເຕັກໂນໂລຊີ ທີ່ກຳນົດໃນມາດຕາ 9; ການດຳເນີນວຽກງານວິທະຍາສາດ ແລະ ເຕັກໂນໂລຊີ
ທີ່ກຳນົດໃນມາດຕາ: 17, 18, 19 ແລະ 20; ມາດຕາທີ 24 ທີ່ກຳນົດການລົງທຶນດ້ານວິທະຍາສາດ ແລະ
ເຕັກໂນໂລຊີ ເປັນຕົ້ນ.

ຈາກນັ້ນຕາງໜ້າອະນຸກຳມະການຮ່າງກົດໝາຍສະບັບດັ່ງກ່າວ ໄດ້ໃຫ້ຄຳຊີ້ແຈງ ແລະ
ຮັບເອົາຄຳຄິດຄຳເຫັນຕ່າງໆຊຶ່ງເຫັນວ່າເປັນຂໍ້ມູນອັນມີຄ່າທີ່ທາງອະນຸກຳ ມະການ
ຈະໄດ້ນຳໄປປັບປຸງແກ້ໄຂ ເພື່ອເຮັດໃຫ້ກົດໝາຍສະບັບນີ້ມີເນື້ອໃນຄົບຖ້ວນສົມບູນ
 2 / 5

ສະພາແຫ່ງຊາດ ຊຸດທີ VII ລະດົມຄວາມເຫັນໃສ່ຮ່າງກົດໝາຍວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ
ກ່ອນຈະນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາການ ຮັບຮອງ ແລະ
ນຳສະເໜີປະທານປະເທດອອກລັດຖະດຳລັດປະກາດໃຊ້ຢ່າງເປັນທາງການ.

ຫຼັງຈາກນັ້ນ, ທ່ານປະທານກອງປະຊຸມ
ໄດ້ສະຫຼຸບສັງລວມການປະກອບຄຳຄິດຄໍາເຫັນຂອງສະມາຊິກສະພາແຫ່ງຊາດໃສ່ຮ່າງກົດໝາຍວ່າດ້ວຍ
ວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອລົງຄະແນນສຽງຮັບຮອງກົດໝາຍສະບັບດັ່ງກ່າວ;
ສະມາຊິກສະພາແຫ່ງຊາດ ໄດ້ໃຊ້ສິດຂອງຕົນເອງຢ່າງເຕັມສ່ວນໃນການລົງຄະແນນສຽງຄັ້ງນີ້. ສສຊ
ເຫັນດີຕໍ່ຮ່າງກົດໝາຍສະບັບນີ້ໂດຍພື້ນຖານ.

ທ່ານປະທານ
ຍັງໄດ້ສະເໜີໃຫ້ອະນຸກຳມະການກົດໝາຍນຳເອົາຄຳປະກອບຄຳຄິດຄໍາເຫັນຂອງສະມາຊິກສະພາແຫ່ງຊາ
ດ ໄປປັບປຸງແກ້ໄຂບາງມາດຕາ ຂອງ ກົດໝາຍວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ສົມບູນຍິ່ງຂື້ນ.

 3 / 5

ສະພາແຫ່ງຊາດ ຊຸດທີ VII ລະດົມຄວາມເຫັນໃສ່ຮ່າງກົດໝາຍວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ

ແຫຼ່ງຂໍ້ມູນ: ກົມວິທະຍາສາດ

 4 / 5

ສະພາແຫ່ງຊາດ ຊຸດທີ VII ລະດົມຄວາມເຫັນໃສ່ຮ່າງກົດໝາຍວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ
 5 / 5